# ໂຢນາ

## ບົດສະແດງວ່າພຣະເຈົ້າຊົງປະສົງໃຫ້ຄົນທັງປວງລອດພົ້ນ

| | |
|---|---|
| ໃຈຄວາມສຳຄັນ | ຮັບສັ່ງມາແຕ່ພຣະເຈົ້າ |
| ຈຳນວນບົດ | ໔ ບົດ |
| ເຣື່ອງເກີດຂຶ້ນຣະຫວ່າງ | ໘໐໐ ປີກ່ອນຄ.ສ. |
| ປະຈຳຢູ່ທີ່ | ພາກເໜືອ |
| ຮັບສັ່ງໃຫ້ໄປທີ່ | ເມືອງນີນີເວ |
| ໂຢນາແປວ່າ | ນົກເຂົາ |
| ຜູ້ທຳນວາຍຄົນທີ | ໕ |

### ໑. ວ່າດ້ວຍປະວັດແລະນິໄສຂອງໂຢນາ

ໃນກະສັດທີສອງ ໑໔:໒໔ ບອກວ່າໂຢນາເປັນຜູ້ທຳນວາຍໃນຄາວກະສັດເຢໂຣໂບອາມທີສອງ ເປັນລູກຂອງທ່ານອາມິດທາຍທີ່ເມືອງຄາດເຫເຟເຣ

ໂຢນາເປັນນັກຊາດນິຍົມຄືຮັກແພງຊາດຂອງຕົນທີ່ສຸດ ແລະ ກຽດຊັງຊາວຕ່າງປະເທດ ເພິ່ນຖືວ່າຊາວອິສຣາເອັນເປັນຊາວທີ່ພຣະເຈົ້າຊົງເລືອກໄວ້ ສນັ້ນເມື່ອພຣະເຢໂຮວາຊົງໃຊ້ເພິ່ນໄປປ່າວປະກາດທີ່ເມືອງນີນີເວຊຶ່ງເປັນຊາວຕ່າງປະເທດ ເພິ່ນບໍ່ໄປແລະປົບໜີໄປທາງອື່ນ

## ໖. ວ່າດ້ວຍຄວາມມຸ່ງໝາຍ

ໜັງສື ໂຢນາຕ່າງຈາກໜັງສືທັງຫລາຍເພາະເພິ່ນບໍ່ໄດ້ ຂຽນຄຳທຳນວາຍໄວ້ຫລາຍ ສ່ວນຫລາຍແລ້ວເພິ່ນໄດ້ຂຽນເຫດການກ່ຽວກັບເພິ່ນເອງ ແຕ່ໜັງສືນີ້ກໍມີຄວາມສຳຄັນຕໍ່ພວກອິສຣາເອັນຫລາຍ ຄືພຣະເຈົ້າມີພຣະປະສົງຢາກໃຫ້ພວກອິສຣາເອັນບ່ຽນຄວາມຄິດ ກ່ຽວກັບ ຄົນຕ່າງຊາດໃໝ່ ໂດຍບໍ່ຢາກໃຫ້ພວກເຂົາຖືລັດທິຊາດນິຍົມຈົນເກີນໄປ ແລະໃຫ້ພວກເຂົາຮູ້ສຶກວ່າພຣະຄຸນກັບພຣະເມດຕາກໍຢູ່ກັບຄົນຕ່າງຊາດດ້ວຍ ຢ່າງນັ້ນພວກ ຊາວນີນີເວຈຶ່ງປ່ຽນ ໃສ່ຄົນຕ່າງຊາດທີ່ ລອດພົ້ນດ້ວຍ ພຣະຄຸນ ຂອງພຣະເຈົ້າ ແລະລອດພົ້ນດ້ວຍການເຊື່ອຟັງພຣະເຢຊູ ເຣື່ອງນີ້ເປັນເຊັ່ນດຽວກັນກັບຄຳປະຕິຍານຂອງພຣະເຈົ້າທີ່ມີຕໍ່ອັບຣາຮາມຄື "ຄອບຄົວທັງປວງໃນທົ່ວໂລກນີ້ຈະໄດ້ຮັບພຣະພອນເພາະເຈົ້າ" ຕົ້ນເດີມ ໑໒:໓

## ໗. ວ່າດ້ວຍການອັສຈັນຂອງໂຢນາ

ຄົນສ່ວນ ຫລາຍ ບໍ່ຍອມ ເຊື່ອວ່າ ໂຢນາຢູ່ ໃນ ທ້ອງປາ ເປັນເວລາສາມວັນແລ້ວໄດ້ອອກມາຈາກປານັ້ນເມື່ອຍັງມີຊີວິດຢູ່ ພວກເຂົາຄິດວ່າເຣື່ອງນີ້ເປັນນິທານຊື່ໆ ແຕ່ພວກເຮົາມີຂໍ້ພິສູດວ່າເຣື່ອງນີ້ໄດ້ເກີດຂຶ້ນຈິງແທ້ໂດຍພຣະເຢຊູເອງກໍຊົງກ່າວວ່າ "ເພາະທ່ານໂຢນາໄດ້ຢູ່ໃນທ້ອງປາໃຫຍ່ເຖິງສາມວັນຢ່າງໃດ ບຸດມະນຸດກໍຈະຢູ່ໃນທ້ອງແຜ່ນດິນເຖິງສາມວັນຢ່າງນັ້ນເໝືອນກັນ" ມັດທາຍ ໑໒:໔໐ ອັນນຶ່ງພຣະເຈົ້ານັ້ນຊົງມີອຳນາດໃຫ້ຄົນທັງຫລາຍຄືນມາຈາກຄວາມຕາຍ ແລ້ວຈະບໍ່ມີອຳນາດຊ່ອຍໃຫ້ທ່ານໂຢນາພົ້ນຈາກຄວາມຕາຍໃນທ້ອງປາຫລື ?

## ໔. ວ່າດ້ວຍເຣືອງສຳຄັນທີ່ມີຢູ່ໃນໜັງສືນີ້

໑. ຄົນບໍ່ມີຄວາມສາມາດທີ່ຈະຫລີກໜີຈາກພຣະເຈົ້າແລະລີ້ຕົວຢູ່

໒. ຜູ້ທີ່ບໍ່ເຊື່ອຟັງພຣະເຈົ້າກໍ່ຈະຖືກໂທດ

໓. ພຣະເຈົ້າຊົງຟັງຄຳຮ້ອງຂໍຂອງຜູ້ທີ່ຫລົບຕັ້ງໃຈໃໝ່

໔. ຄຳບ່າວປະກາດຂອງໂຢນາ ແລະ ການປະໃຈເກົ່າເອົາໃຈໃໝ່ ຂອງຊາວນີນີເວໄດ້ເປັນແບບຢ່າງອັນດີຂອງພວກເຮົາ ພຣະເຢຊູຊົງຕັ້ງເຂົາໄວ້ໃຫ້ເປັນແບບຢ່າງ

໕. ໂຢນາບໍ່ ເຫັນ ດ້ວຍທີ່ ພຣະເຈົ້າ ຊົງຍົກ ໂທດ ໃຫ້ ຊາວນີນີເວ ເຣື່ອງນີ້ ສອນພວກເຮົາວ່າ ຕ້ອງ ຣະມັດຣະວັງຢ່າເຮັດອັນໃດ ຮ້ອນລົນກັບຄົນທີ່ບໍ່ເຊື່ອ ຕ້ອງມີໃຈກວ້າງຂວາງຕໍ່ພວກເຂົາເລື້ອຍ ໆ

## ໕. ການຈັດແບ່ງບົດຫົວຂໍ້ບົດ

ບົດທີ ໑ ຄວາມບໍ່ເຊື່ອຟັງຂອງໂຢນາ

ບົດທີ ໒ ຄວາມອອນວອນຂອງໂຢນາ

ບົດທີ ໓ ການບ່າວປະກາດຂອງໂຢນາ– ຊາວນີນີເວປະໃຈເກົ່າເອົາໃຈໃໝ່

ບົດທີ ໔ ຄວາມບໍ່ເຫັນດີຂອງໂຢນາ